*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, No. 4, 250-257*
*https://doi.org/10.69692/SUJMRD1004250*

# Discourse Connectors in Udin Bounyavong's "From Ten Years Ago volume 3" Short Story

**Phoukham KHANTHAVONGXAY [1] Bualy PAPHAPHANH [2]**
*Faculty of Letters, National University of Laos, Lao PDR*

***Correspondence:** Phoukham KHANTHAVONGXAY, Faculty of Letters, National University of Laos, Tel: 020 22227914
Email: p.khanthavongxay@noul.edu.la

***Submitted: September 27, 2024***
***Revised: November 29, 2024***
***Accepted: December 10, 2024***

**Abstract**

This research aims to analyze cohesive units based on their semantic types and functions in the short story collection *"From Ten Years Ago, Volume 3"*, a masterpiece of children's literature by Udin Bunyawong, an outstanding literary artist in the field of literature in 2010. The collection comprises 11 short stories. The statistical method used for data analysis is percentage. The Result found that cohesive unit functions are divided into 2 types: micro-level cohesive units and macro-level cohesive units. For the semantic types of micro-level cohesive units, there are 8 subtypes, ranked by frequency of use from highest to lowest. They are contrastive (18.42%), causal (16.45%), elaboration (15.13%), conditional (12.50%), alternative (11.18%), temporal (9.87%), exemplificatory (8.55%), conclusion(7.89%). For the semantic types of macro-level cohesive units, there are 5 subtypes, ranked by frequency of use from highest to lowest. They are contrastive (23.68%), causal (21.71%), conclusion (19.74%), sequence (18.42%), and elabora- tion (16.45%).

**Keywords:** Cohesion , Connectors, Lao short story

## 1. ພາກສະເໜີ

ໃນການສື່ສານດ້ວຍພາສາຂອງມະນຸດເຮົາໃຊ້ພາສາເປັນບົດ ເພື່ອຊີ້ແຈ້ງຖະແຫຼງໄຂບັນຫາຕ່າງໆ ບົດນັ້ນເປັນບົດສື່ຄວາມ ເຖິງຈະມີຫຼາຍປະເພດບົດສື່ຄວາມ ເພາະສະນັ້ນ,ໃນການໃຊ້ຈະເປັນບົດປະເພດໃດກໍຕາມ ມັນອາໄສການຜູກສັບເຂົ້າກັນໃຫ້ເປັນຖ້ອຍຄວາມ ຖ້ອຍຄວາມຈຶ່ງມີບົດບາດສຳຄັນໃນການໃຊ້ພາສາໃນຖານະເປັນພາຫະນະ ເພື່ອການສື່ສານທີ່ດີເລີດຂອງມະນຸດຊາດ. ຖ້ອຍຄວາມເປັນບົດພື້ນຖານຂອງບົດສື່ຄວາມ ທັງເປັນຫົວໜ່ວຍປະກອບສ້າງບົດໃຫ້ແກ່ປະເພດບົດຕ່າງໆ. ເມື່ອເຮົາເຂົ້າໃຈການຜູກຄວາມໄດ້ດີຈະເຮັດໃຫ້ເຮົາສາມາດໃຊ້ພາສາໄດ້ຢ່າງຄ່ອງແຄ້ວ ແລະ ເປັນລະບົບລະບຽບບໍ່ສັບໜ້າສັບຫຼັງ ສາມາດດຶງດູດໃຫ້ຜູ້ອ່ານຕິດຕາມບັນຫາໄດ້

ປັດຈຸບັນ, ນັກພາສາສາດສະໄໝໃໝ່ໃຫ້ຄວາມສົນໃຈ ແລະ ນິຍົມສຶກສາການວິເຄາະພາສາລະດັບບົດສື່ຄວາມ (discourse analysis) ເຊິ່ງເປັນສ່ວນໜຶ່ງຂອງການສຶກສາພາສາຕາມແນວທາງພາສາສາດ ທີ່ສຶກສາພາສາທັງເປັນພາສາເວົ້າ ແລະ ພາສາຂຽນທີ່ສື່ສານໃນຕົວຈິງ ເຊັ່ນ ການສຶກສາໜ່ວຍຂອງພາສາທີ່ປາກົດຕໍ່ເນື່ອງໃນລະດັບທີ່ສູງກວ່າປະ ໂຫຍກ ເພື່ອອະທິບາຍໂຄງສ້າງ ແລະ ລັກສະນະຂອງພາສາທີ່ປາກົດ (Louwerse, 2000) ນອກຈາກນີ້, ຍັງຄຳນຶງເຖິງຄວາມສຳພັນທາງໄວຍາກອນ ແລະ ຄວາມໝາຍຂອງຖ້ອຍຄວາມທີ່ປາກົດວ່າມີຄວາມເປັນເອກະພາບທາງດ້ານເນື້ອໃນ ບໍລິບົດໃນການໃຊ້ພາສາ ດ້ວຍການຜູກຄວາມໃຫ້ມີລັກສະນະກ່ຽວເນື່ອງກັນໄປໃນທາງດຽວກັນຫຼືບໍ່. ສະນັ້ນ, ການວິເຄາະບົດສື່ຄວາມ ຍັງຈຳເປັນຕ້ອງພິຈາລະນາເຖິງປະເພດຂອງບົດຕ່າງໆ ເນື່ອງຈາກວ່າໂຄງສ້າງຂອງແຕ່ບົດມີລັກສະນະທີ່ແຕກຕ່າງກັນ ເຊິ່ງສອດຄ່ອງກັບ (longacre, 1983) ໄດ້ສະເໜີຫຼັກການການຈັດປະເພດຂອງບົດໄວ້ 2 ປະການຄືການຮຽງລຳດັບ (contingent temporal succession) ແລະ ແນວໂນ້ມສູ່ຜູ້ກະທຳ (agent orientation) ເຮັດໃຫ້ສາມາດແບ່ງປະເພດຂອງບົດອອກເປັນ 2 ປະເພດໄດ້ແກ່ ບົດປະເພດເລື່ອງເລົ່າ, ປະເພດຂະບວນການ, ປະເພດຂໍ້ຄວນປະຕິບັດ ແລະ ບົດປະເພດອະທິບາຍ ເຊິ່ງໃນບົດນັ້ນ ຕົວບົດຕ້ອງປະກອບດ້ວຍໜ່ວຍທາງພາສາຫຼາຍລະດັບ. ດ້ວຍເຫດນັ້ນ, ພາສາທີ່ໃຊ້ໃນການເລົ່າເຫດການຕ່າງໆຂອງບົດ ຈຶ່ງມີລັກສະນະທີ່ມີຫຼາຍຖ້ອຍຄວາມ ຫຼື ອະລິທີ່ປາກົດຕໍ່ເນື່ອງກັນ ເຊິ່ງນັກພາສາສາດເອີ້ນວ່າ "ບົດສື່ຄວາມ" (discourse) ບົດສື່ຄວາມ ເປັນໜ່ວຍພາສາໃນລະດັບສູງກວ່າປະໂຫຍກທີ່ປະກອບຂຶ້ນດ້ວຍໜຶ່ງຖ້ອຍຄວາມ ຫຼື ຫຼາຍຖ້ອຍຄວາມທີ່ປາກົດຮ່ວມກັນໃຫ້ເປັນກ້ອນເອກະພາບໜຶ່ງໃນບົດສື່ຄວາມ ສະນັ້ນ, ໃນແຕ່ລະຖ້ອຍຄວາມຈຶ່ງມີຄວາມສຳພັນເຊິ່ງກັນແລະກັນໜ້າທີ່ ແລະ ທາງຄວາມໝາຍ ໃນການສື່ສານອັນດຽວກັນ (Angkhaphanichkit, 2019) ແລະ (Halliday & Hasan, 1976) ຄຸນສົມບັດສຳຄັນອັນໜຶ່ງຂອງບົດສື່ຄວາມທຸກປະເພດກໍຄື ການຜູກຄວາມ (cohesion) ເຊິ່ງມີຄວາມໝາຍຕາມທີ່ (Burusphat, 1994) ອະທິບາຍໄວ້ວ່າ ຄວາມສຳພັນລະຫວ່າງຖ້ອຍຄວາມໜຶ່ງກັບອີກຖ້ອຍຄວາມໜຶ່ງ ທີ່ເຮັດໜ້າທີ່ເປັນອົງປະກອບໃຫ້ບົດສື່ຄວາມປະກອບດ້ວຍຖ້ອຍຄວາມຕ່າງໆ ບັນດາຖ້ອຍຄວາມເຫຼົ່ານັ້ນບໍ່ແມ່ນເປັນພຽງການນຳມາຮຽງກັນເຂົ້າໃຫ້ບົດສື່ຄວາມຍາວຂຶ້ນເທົ່ານັ້ນ ດ້ານເນື້ອໃນຂອງຖ້ອຍເຫຼົ່ານັ້ນຕ້ອງມີຄວາມກ່ຽວເນື່ອງ ແລະ ສຳພັນກັນເຮັດໃຫ້ຜູ້ຮັບສານ ແລະ ສົ່ງສານສາມາດເຂົ້າໃຈ ເຖິງໃຈຄວາມສຳຄັນທີ່ຢາກສື່ສານກັນໄດ້ ຄວາມກ່ຽວເນື່ອງຂອງຖ້ອຍຄວາມຕ່າງໆໃນບົດສື່ຄວາມເອີ້ນວ່າ ການຜູກຄວາມ.

ການຜູກຄວາມ ເປັນການອາໄສຖ້ອຍຄວາມ ກັບ ຖ້ອຍຄວາມມາປະສົມປະສານເຂົ້າກັນ ບົນພື້ນຖານໃນການສ້າງການຜູກ

ຄວາມໃຫ້ເປັນກ້ອນເອກະພາບໜຶ່ງໆນັ້ນ ແຕ່ມັນຍັງບໍ່ໝົດພຽງເທົ່ານີ້. ມັນຍັງຮຽກຮ້ອງໃຫ້ມີພາຫະນະພາສາເປັນເຄື່ອງມືຊ່ວຍໃນການຜູກຄວາມໃນບົດໃຫ້ເປັນກ້ອນເອກະພາບດ້ານເນື້ອໃນຄວາມໝາຍ, ຄວາມເປັນໂລສິກ ແລະ ບໍລິບົດການສື່ສານນຳອີກ (Bamrungrak, 2020) ຈາກການສຶກສາຜົນງານຂອງນັກພາສາສາດຫຼາຍກຸ່ມທີ່ວິເຄາະເລື່ອງບົດສື່ຄວາມເຫັນວ່າ ບັນດາແນວຄິດທິດສະດີເຫຼົ່ານັ້ນລ້ວນແຕ່ເວົ້າເຖິງຄວາມເປັນເອກະພາບໃນບົດສື່ຄວາມວ່າ ເກີດມາຈາກອົງປະກອບຫຼາຍປະການເຊັ່ນ (Werth, 1984)ໄດ້ກ່າວເຖິງຄວາມສຳພັນສະແດງຄວາມເອກະພາບໃນບົດເກີດມາຈາກປັດໄຈຫຼັກ 3 ຢ່າງຄືການຜູກຄວາມດ້ວຍຮູບ (formal connectivity or cohesion) ເປັນການຜູກລະຫວ່າງຖ້ອຍຄວາມກັບຖ້ອຍຄວາມໃນຕົວບົດດ້ວຍຮູບພາສາໄດ້ແກ່ ຄຳສັບພະນາມ, ນາມອະລິຊ້ຳຮູບ, ການແທນ, ການລະເປັນຕົ້ນ, ການໃຊ້ຄຳຮ່ວມກຸ່ມ (lexical connectivity or collocation) ເປັນການຜູກທາງຄວາມໝາຍລະຫວ່າງຄຳສັບຕ່າງໆ ແລະ ການໃຊ້ໜ່ວຍຜູກຄວາມ (logical connectivity or connectors) ເປັນການຜູກລະຫວ່າງຖ້ອຍຄວາມທີ່ຕິດຕໍ່ກັນໃນຕົວບົດ ຫຼື ລະຫວ່າງສ່ວນຕ່າງໆຂອງບົດສື່ຄວາມກັບໜ່ວຍຜູກຄວາມ; ສ່ວນ, (Wipah, 1986) ໄດ້ສະຫຼຸບກ່ຽວກັບເລື່ອງເອກະພາບໃນບົດສື່ຄວາມຂອງພາສາໄທວ່າ ມີການອ້າງເຖິງ, ການແທນທີ່, ການລະ, ການເຊື່ອມໂຍງທາງຄຳສັບ, ການໃຊ້ຄຳເຊື່ອມຕໍ່ ແລະ ການຊ້ຳ; ການຜູກຄວາມຈະປາກົດໃຫ້ເຫັນໃນບໍລິບົດພາສາດ້ວຍຮູບພາສາ ທີ່ເປັນເຄື່ອງມືຜູກຄວາມ (cohesion devices) ເຊັ່ນ ການໃຊ້ຄຳເຊື່ອມຕໍ່ເພື່ອຜູກຄວາມເຂົ້າຫາກັນ ໂດຍຄຳເຫຼົ່ານັ້ນເຮັດໜ້າທີ່ສະແດງຄວາມສຳພັນທາງຄວາມໝາຍລະຫວ່າງຖ້ອຍຄວາມ ຫຼື ສະຖານະການອື່ນໆໃນຊຸດບົດສື່ຄວາມໜຶ່ງໆ.

ເຫັນໄດ້ວ່າ ການຜູກຄວາມມີພາຫະນະຫຼາຍປະເພດທີ່ໃຊ້ເພື່ອຜູກຄວາມ ໃຫ້ມີຄວາມກ່ຽວເນື່ອງ ແລະ ເປັນກ້ອນເອກະພາບໜຶ່ງໃນພາຫະນະນັ້ນ ການໃຊ້ຄຳເຊື່ອມຕໍ່ ຫຼື ໜ່ວຍຜູກຄວາມກໍເປັນວິທີໜຶ່ງທີ່ຊ່ວຍບອກຄວາມສຳພັນຕ່າງໆຂອງຖ້ອຍຄວາມ ກັບ ຖ້ອຍຄວາມ ຫຼື ຖ້ອຍຄວາມ ກັບ ຕົວບົດດ້ານໂຄງສ້າງຂອງສ່ວນຕ່າງໆຂອງບົດສື່ຄວາມ; ບັນຫານີ້ໃນພາສາຕ່າງປະເທດອື່ນໆ ໄດ້ມີນັກຄົ້ນຄວ້ານັກວິຊາການພາສາສາດຫຼາຍທ່ານໄດ້ ສຶກສາກ່ຽວກັບໜ່ວຍຜູກຄວາມເຊັ່ນ (Yodsirajinda, 2002)ໄດ້ນຳເອົາແນວຄິດການຜູກຄວາມມາສຶກສາໃນຫົວຂໍ້: "ໜ່ວຍຜູກຄວາມໃນວັດຈະນະລີລາແບບເວົ້າ ແລະ ແບບຂຽນໃນພາສາໄທ" ໃນບົດສື່ຄວາມ 4 ປະເພດຄື ບົດສື່ຄວາມເລື່ອງເລົ່າ, ບົດສື່ຄວາມໂນ້ມນ້າວ, ບົດສື່ຄວາມຂະບວນການ ແລະ ບົດສື່ຄວາມສະ ແດງຄວາມຄິດເຫັນ; (Darachai & Wansannapreecha, 2019) ສຶກສາການຜູກຄວາມດ້ວຍຄຳເຊື່ອມໃນຄຳວິນິດໄສທາງສາສະໜາອິດສະລາມທີ່ເປັນພາສາໄທຂອງຈຸລາຣາມົນຕີ ຜົນການສຶກສາພົບວ່າ ສາມາດຈຳແນກການຜູກຄວາມດ້ວຍຄຳເຊື່ອມສາມາດ ຈຳແນກໄດ້ເຖິງ 14 ປະເພດ ແລະ (Suwatchai, 2010) ສຶກສາການຜູກຄວາມໃນເລື່ອງເລົ່າຂອງເດັກໄທທີ່ມີອາຍຸ 4-7 ປີ ທີ່ມີພື້ນຖານສິ່ງແວດລ້ອມຕ່າງກັນ ຄື ເດັກກຸ່ມໜຶ່ງເຕີບໃຫຍ່ໃນສະຖານສົງເຄາະ ແຕ່ອີກກຸ່ມໜຶ່ງເປັນເດັກທີ່ເຕີບໃຫຍ່ໃນຄອບຄົວປົກກະຕິ ຈາກການຄົ້ນຄວ້າເຫຼົ່ານັ້ນ ພໍສະຫຼຸບໄດ້ວ່າ ການຜູກຄວາມຍັງເປັນແນວຄິດໜຶ່ງທີ່ຍັງສາມາດ ນຳມາສຶກສາໃນຂໍ້ຄວາມອື່ນໆໄດ້ອີກຫຼາກຫຼາຍທາງ. ອີກປະເດັນສຳຄັນຢ່າງໜຶ່ງ ເຫັນວ່າໃນພາສາລາວການຄົ້ນຄວ້າກ່ຽວກັບໄວຍາກອນບົດສື່ຄວາມ ຫຼື ການສຶກສາພາສາທີ່ເໜືອກວ່າປະໂຫຍກ ຍັງເຫັນວ່າເປັນບັນຫາໃໝ່ຢູ່ ແລະ ຄວນໄດ້ສຶກສາຍ້ອນວ່າ ທິດສະດີໄວຍາກອນພາສາລາວຫຼາຍຫົວກ່າວຮອດພຽງແຕ່ປະໂຫຍກ ຫຼື ວາກະຍະສຳພັນ ເຊັ່ນ ໄວຍາກອນປັດຈຸບັນພາກທີ 3 ພາກວາກະຍະສຳພັນ ເຊິ່ງເນັ້ນເລື່ອງໂຄງສ້າງ ແລະ ຊະນິດຂອງປະໂຫຍກເປັນຫຼັກ; ໃນເບື້ອງບົດຄົ້ນຄວ້າກ່ຽວກັບພາສາລາວຫຼາຍບົດທີ່ຜ່ານມາ ສ່ວນຫຼາຍແມ່ນລົງເລິກກ່ຽວກັບສຽງ, ການປະສອບສ້າງສັບ ແລະ ປະໂຫຍກເຊັ່ນ ບົດຄວາມຂອງ Nimnuan et al. (2023) ທີ່ສຶກສາກ່ຽວກັບ ລະບົບສຽງພະຍັນຊະນະ, ສະຫຼະ ແລະ ວັນນະຍຸດຂອງພາສາຖິ່ນ ໃນຫົວຂໍ້ ລະບົບສຽງພາສາໄທລື້ ບ້ານດອນຕັນ ເມືອງຊຽງຮ່ອນ ແຂວງໄຊຍະບູລີ ຫຼື ການສຶກສາພາສາໃນບົດເລື່ອງຕ່າງໆນັ້ນ ກໍຈະເປັນການຄົ້ນຄວ້າທີ່ເລັ່ງໄປທາງ ຄຳ ວະລີ ປະໂຫຍກ ຫຼື ສຳນວນຂອງພາສາຫຼາຍກວ່າ ດັ່ງບົດຄວາມຂອງ (Duangchan, 2023) ໃນການສຶກສາການໃຊ້ໂວຫານພາບບົດໃນບົດເພັງປະຕິວັດລາວ ເປັນການຄົ້ນຄວ້າເຖິງການໃຊ້ໂວຫານພາບບົດປະເພດຕ່າງໆເຊັ່ນ ອຸປະມາ, ອຸປະລັກ, ອະນຸນາມໄນເປັນຕົ້ນ ເຮັດໃຫ້ຮູ້ເຖິງການພາສາທີ່ສື່ຄວາມໝາຍຕາມບໍລິບົດໃນບົດເພັງປະຕິວັດລາວ ແລະ ຖ້າການສຶກສາພາສາຂຽນໃນບົດເລື່ອງ ກໍສຶກສາໄປທາງບົດວັນນະຄະດີຫຼາຍກວ່າ ດັ່ງບົດຄວາມຂອງ Syvongsak et al. (2021) ຫົວຂໍ້: ລັດວັນນະຄະດີໃນນະວະນິຍາຍພະຍຸຊີວິດ ຂອງດາວເໜືອທີ່ສຶກສາກ່ຽວກັບພາສາໃນວັນນະຄະດີ ຜົນການສຶກສາໃຫ້ຮູ້ເຖິງການໃຊ້ພາສາຂອງນັກຂຽນທີ່ພັນລະນາເຖິງຄວາມຮັກທີ່ມີຫຼາກຫຼາຍລົດຊາດຄື ລົດຄວາມຮັກລະຫວ່າງສະມາຊິກໃນຄອບຄົວ, ຄວາມຮັກລະຫວ່າງໝູ່ເພື່ອນ, ລົດຄວາມຮັກລະຫວ່າງໜຸ່ມສາວເປັນຕົ້ນ.

ດັ່ງນັ້ນ, ຜູ້ສຶກສາຈຶ່ງສົນໃຈຢາກສຶກສາກ່ຽວກັບໜ່ວຍຜູກຄວາມໃນບົດສື່ຄວາມ ປະເພດບົດສື່ຄວາມເລື່ອງເລົ່າໂດຍ ເອົາເລື່ອງສັ້ນສຸດຍອດວັນນະຄະດີສຳລັບເດັກຂອງ (Udin, 2010)ໃນຊຸດ "ຈາກໄປແລ້ວສິບປີເຫຼັ້ມ 3". ສະນັ້ນ, ການສຶກສາຄັ້ງນີ້ ຜູ້ສຶກສາຈະເນັ້ນການໃຊ້ໜ່ວຍຜູກຄວາມປາກົດຕາມໜ້າທີ່ ແລະ ຕາມເກນການແບ່ງຄວາມໝາຍຂອງໜ່ວຍຜູກຄວາມທີ່ສະແດງຄວາມສຳພັນຂອງໜ່ວຍຜູກ ລະຫວ່າງຖ້ອຍຄວາມ ກັບ ຖ້ອຍຄວາມ, ຖ້ອຍຄວາມ ກັບ ບົດສື່ຄວາມເປັນຕົ້ນ. ເພື່ອເປັນປະໂຫຍດໃນການສຶກສາເຖິງຫຼັກການ ແລະ ການເລືອກໃຊ້ໜ່ວຍຜູກຄວາມຕ່າງໆ ເຂົ້າໃນການຂຽນບົດປະເພດຕ່າງໆ ທັງເປັນການຊ່ວຍສ້າງແນວທາງ ໃນໄວຍາກອນການຂຽນໃຫ້ເປັນຮູບປະທຳຫຼາຍຂຶ້ນ. ດັ່ງ ນັ້ນ, ຈຶ່ງມີຈຸດປະສົງ ເພື່ອວິເຄາະໜ່ວຍຜູກຄວາມຕາມປະເພດຄວາມໝາຍ ແລະ ໜ້າທີ່ຂອງບົດສື່ຄວາມໃນພາສາລາວ ໃນຊຸດ "ຈາກໄປແລ້ວສິບປີເຫຼັ້ມ 3 " ຂອງອຸທິນ ບຸນຍາວົງ.

**2. ອຸປະກອນ ແລະ ວິທີການ**

**2.1 ວິທີການຄົ້ນຄວ້າ**

ການຄົ້ນຄວ້າຄັ້ງນີ້ ໃຊ້ການສຶກສາແບບທຸຕິຍະພູມ ອະທິບາຍແບບພັນລະນາ ໂດຍໃຊ້ວິທີການສຸ່ມ ຕົວຢ່າງຕາມຕາຕະລາງຂອງ (Krejcie & Morgan, 1970)ໃນຈຳນວນປະຊາກອນທັງໝົດ 152

ບົດ ໃນນັ້ນຈະໄດ້ 100 ບົດເພື່ອຕົວຢ່າງທີ່ເຫັນວ່າສອດຄ່ອງ ແລະ ເໝາະສົມກັບຈຸດປະສົງຂອງການຄົ້ນຄວ້າ ເພື່ອດຳເນີນການວິເຄາະຕົວຈິງ.

**2.2 ການເກັບກຳຂໍ້ມູນ**

ຜູ້ຄົ້ນຄວ້າໄດ້ດຳເນີນການເກັບຮວບຮວມຂໍ້ມູນ ຂອງໜ່ວຍຜູກຄວາມດຳເນີນດັ່ງລຸ່ມນີ້:

1). ຮວບຮວມ ແລະ ສຶກສາເອກະສານທີ່ກ່ຽວຂ້ອງກັບໜ່ວຍຜູກຄວາມໃນບົດສື່ຄວາມ

2). ຄັດເລືອກຂໍ້ມູນໂດຍໃຊ້ເກນປະເພດບົດສື່ຄວາມເລື່ອງເລົ່າ ທີ່ເປັນພາສາຂຽນ

3). ໃຊ້ຕາຕະລາງເພື່ອຮວບຮວມສະເພາະໜ່ວຍຜູກຄວາມໃນບົດສື່ຄວາມ ທີ່ປາກົດເປັນຮູບພາສາເທົ່ານັ້ນ ໂດຍໃຊ້ເກນທາງອັດຖະສາດ ແລະ ເກນທາງວາກະຍະສຳພັນ

4). ໃນການຕັດແຍກຂໍ້ມູນ ໜ່ວຍຜູກຄວາມຕ້ອງບໍ່ແມ່ນໜ່ວຍທີ່ເປັນອົງປະກອບທີ່ເຮັດໜ້າທີ່ເປັນຕົວຕັ້ງ ຫຼື ຕົວສຳແດງ ແລະ ຕຳແໜ່ງຂອງໜ່ວຍຜູກຄວາມຈະປາກົດລະຫວ່າງການເຊື່ອມຕໍ່ຂອງຖ້ອຍຄວາມ ກັບ ຖ້ອຍຄວາມ ແລະ ຖ້ອຍຄວາມ ກັບ ບົດສື່ຄວາມ

**2.3 ການວິເຄາະຂໍ້ມູນ**

ປະເພດທາງຄວາມໝາຍຂອງໜ່ວຍຜູກຄວາມໄດ້ປະຍຸກໃຊ້ທິດສະດີໄວຍາກອນປັດຈຸບັນ ພາກທີ 2 ວະຈີວະພາກ Paphaphanh (2000) ໄດ້ແບ່ງຄຳເຊື່ອມຕໍ່ອອກເປັນ 8 ຊະນິດ ແລະ ແນວຄິດທິດສະດີຂອງ Wipah (1986) ທີ່ແບ່ງຄຳເຊື່ອມຕໍ່ອອກເປັນ 16 ຊະນິດ; ສ່ວນປະເພດໜ້າທີໜ່ວຍຜູກຄວາມຈຸລະພາກ ແລະ ມະຫາພາກແມ່ນອີງຕາມການຈັດແບ່ງຂອງທິດສະດີຂອງ (Werth, 1984).

**3. ຜົນຂອງການຄົ້ນຄວ້າ**

ຈາກການວິເຄາະໜ່ວຍຜູກຄວາມໃນເລື່ອງສັ້ນໃນຊຸດ "ຈາກໄປແລ້ວສິບປີເຫຼັ້ມ3" ຂອງອຸທິນ ບຸນຍາວົງ ມີດັ່ງນີ້:

**3.1 ປະເພດຄວາມໝາຍ ແລະ ໜ່ວຍຜູກຄວາມຈຸລະພາກ**

ໜ່ວຍຜູກຄວາມຕາມໜ້າທີ່ຈຸລະພາກປາກົດ 8 ປະເພດຄວາມໝາຍໄດ້ແກ່ ໜ່ວຍຜູກສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງການຂະຫຍາຍຄວາມ, ສະແດງເງື່ອນໄຂ, ສະແດງທາງເລືອກ, ສະແດງເວລາ, ສະແດງຕົວຢ່າງ, ແລະ ໜ່ວຍສະແດງການສະຫຼຸບຄວາມ ດັ່ງຂໍ້ມູນໃນ (ຕາຕະລາງ 1) ເຊິ່ງສະແດງໃຫ້ເຫັນວ່າການຜູກຄວາມດ້ວຍໜ່ວຍຜູກຄວາມທີ່ປາກົດຫຼາຍກວ່າໝູ່ແມ່ນໜ່ວຍຜູກສະແດງຄວາມຂັດແຍ້ງ (ຮ້ອຍລະ 18.42) ຮອງລົງມາຄືໜ່ວຍຜູກສະແດງເຫດຜົນ (ຮ້ອຍລະ 16.45) ແລະ ໜ່ວຍຜູກສະແດງການຂະຫຍາຍຄວາມ (ຮ້ອຍລະ 15.13) ຕາມລຳດັບຂອງການປາກົດໜ່ວຍຜູກຄວາມ 8 ປະເພດທາງຄວາມໝາຍດັ່ງຕໍ່ໄປນີ້

**1) ໜ່ວຍຜູກສະແດງຄວາມຂັດແຍ້ງ**

ໜ່ວຍຜູກສະແດງຄວາມຂັດແຍ່ງ ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມຂັດແຍ້ງກັນແຕກຕ່າງ ຫຼື ກົງກັນ ຂ້າມກັນຂອງ 2 ຂໍ້ຄວາມ ອາດແຕກຕ່າງກັນທາງດ້ານຄວາມເປັນຈິງ ຫຼື ຄວາມຄິດກໍໄດ້ເຊັ່ນ ແຕ່, ແຕ່ວ່າ, ພຽງແຕ່

ຕົວຢ່າງ 1: ໃຈລູກນະເກັ່ງຫຼາຍແມ່ພູມໃຈອີຫຼີ ມີລູກຊາຍໃຈກ້າໃຈເດັດ ແຕ່ວ່າ ລູກຍັງນ້ອຍອ້າຍບໍ່ໃຫ້ໄປນຳກຳເຮັດວຽກອັນອື່ນແທນໄດ້. (ເຜີ້ງທອງຮັງ: 31)

ຈາກຕົວຢ່າງທີ 1: ເປັນການຜູກຄວາມຂອງໜ່ວຍຜູກບອກຄວາມຂັດແຍ້ງລະຫວ່າງ 2 ຖ້ອຍຄວາມຄື ຖ້ອຍຄວາມທີ່ໜຶ່ງ "ໃຈລູກນະເກັ່ງຫຼາຍແມ່ພູມໃຈອີຫຼີທີ່ມີລູກຊາຍໃຈກ້າໃຈເດັດ" ແລະ ຖ້ອຍຄວາມທີສອງ "ລູກຍັງນ້ອຍ ອ້າຍບໍ່ໃຫ້ໄປນຳກຳເຮັດວຽກອັນອື່ນແທນໄດ້" ເຊິ່ງທັງສອງຖ້ອຍຄວາມທັງໜ້າ ແລະ ຫຼັງມີຄວາມຂັດແຍ້ງກັນທາງດ້ານເນື້ອໃນເມື່ອແຍກເປັນຖ້ອຍຄວາມຍ່ອຍ. ດັ່ງນັ້ນ, ຈຶ່ງໃຊ້ໜ່ວຍຜູກ "ແຕ່ວ່າ" ເຂົ້າມາເປັນຕົວເຊື່ອມໃນການຜູກສອງຖ້ອຍຄວາມເຂົ້າເປັນຕົວບົດດຽວກັນ.

**1) ໜ່ວຍຜູກສະແດງເຫດຜົນ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງສາເຫດຂອງການເກີດເຫດການນັ້ນໆ: ເນື່ອງຈາກ, ເຫດທີ່ວ່າ, ກໍເພາະ, ຈຶ່ງ, ດັ່ງນັ້ນ, ດ້ວຍເຫດນີ້ຈຶ່ງ

ຕົວຢ່າງ 2: "ບຸນລຸນເກີດອາການບໍ່ພໍໃຈ ກໍເພາະ ຜູ້ເປັນອ້າຍຊິ່ຮັບໜ້າທີ່ເປັນຫົວໜ້າ ກອງຫຼອນປະຈຳບ້ານ ບໍ່ໃຫ້ໄປຮ່ວມນຳ ໃນການຈອບທຳລາຍກວາດລ້າງພວກປະຕິການທີ່ມາເຄື່ອນໄຫວໃນຂົງເຂດບ້ານນາແຢນີ້." (ເຜີ້ງທອງຮັງ:31)

ຈາກຕົວຢ່າງທີ 2: ເປັນການຜູກຄວາມຂອງໜ່ວຍຜູກສະແດງເຫດຜົນລະຫວ່າງ 2 ຖ້ອຍຄວາມນຳກັນຄື ຖ້ອຍຄວາມທີ່ໜຶ່ງ "ບຸນລຸນເກີດອາການບໍ່ພໍໃຈ" ແລະ ຖ້ອຍຄວາມທີ່ສອງ "ຜູ້ເປັນອ້າຍຊິ່ຮັບໜ້າທີ່ເປັນຫົວໜ້າກອງຫຼອນປະຈຳບ້ານ ບໍ່ໃຫ້ໄປຮ່ວມນຳ ໃນການຈອບທຳລາຍກວາດລ້າງພວກປະຕິການທີ່ມາເຄື່ອນໄຫວໃນຂົງເຂດບ້ານນາແຢນີ້." ຖ້ອຍຄວາມທາງໜ້າເປັນຖ້ອຍຄວາມບອກເຫດ ສ່ວນຖ້ອຍຄວາມຫຼັງເປັນຖ້ອຍຄວາມບອກຜົນ. ດັ່ງນັ້ນ, ຈຶ່ງໃຊ້ໜ່ວຍຜູກ "ກໍເພາະ" ເປັນຕົວເຊື່ອມທັງສອງຖ້ອຍຄວາມເຂົ້າກັນໃຫ້ເຫັນວ່າທັງສອງຂໍ້ຄວາມມີຜົນກະທົບໄປມາເຊິ່ງກັນແລະກັນໃນບົດສື່ຄວາມ.

**2) ໜ່ວຍຜູກສະແດງການຂະຫຍາຍຄວາມ**

ໝາຍເຖິງໜ່ວຍຜູກຄວາມ ທີ່ສະແດງຄວາມໝາຍຂອງການອະທິບາຍຊ້ຳເພື່ອຂະຫຍາຍຂໍ້ຄວາມທີ່ຢູ່ທາງໜ້າ: ເພາະວ່າ, ຄື, ກໍຄື, ນັ້ນຄື, ອີກແນວໜຶ່ງ

ຕົວຢ່າງ 3 : "ໄນສິມມີສິ່ງມາສະເໜີແປກປະຫຼາດກວ່າໝູ່ຮຽກສຽງຫົວໄດ້ຫຼາຍກວ່າໝູ່ ນັ້ນຄື ຖົງປະລາສະຕິກຂະໜາດທໍ່ຖົງໂອລຽງ ເຕັມໄປດ້ວຍແມງວັນທີ່ຕາຍແລ້ວ." (ປາບແມງວັນ: 28)

ຈາກຕົວຢ່າງທີ 3 : ເປັນການຜູກຄວາມຂອງໜ່ວຍຜູກສະແດງການຂະຫຍາຍຄວາມຂອງຖ້ອຍຄວາມທີ່ປາກົດຢູ່ທາງໜ້າເພື່ອເປັນການອະທິບາຍຊ້ຳຄືນຄວາມໝາຍຂອງຖ້ອຍຄວາມທາງໜ້າເພື່ອໃຫ້ລາຍລະອຽດເພີ່ມເຊັ່ນ ຖ້ອຍຄວາມທີ່ໜຶ່ງ "ໄນສິມມີສິ່ງມາສະເໜີແປກປະຫຼາດກວ່າໝູ່..." ແລະ ຖ້ອຍຄວາມທີ່ສອງ "ຖົງປະລາສະຕິກຂະໜາດທໍ່ຖົງໂອລຽງເຕັມໄປດ້ວຍແມງວັນທີ່ຕາຍແລ້ວ." ໂດຍການໃຊ້ຄຳວ່າ "ນັ້ນຄື" ເປັນໜ່ວຍຜູກເພື່ອຂະຫຍາຍຄວາມໝາຍຂໍ້ມູນທີ່ຍັງບໍ່ທັນຈະແຈ້ງ ຫຼື ຕ້ອງໄດ້ຂະຫຍາຍຄວາມ

ເພີ່ມຈຶ່ງໄດ້ຄວາມໝາຍຈະແຈ້ງຂຶ້ນຕື່ມດັ່ງສິ່ງທີ່ໄມສົມມານຳສະເໜີແປກປະຫຼາດແນວໃດ.

**3) ໜ່ວຍຜູກສະແດງເງື່ອນໄຂ**

ໜ່ວຍຜູກສະແດງເງື່ອນໄຂ ໝາຍເຖິງໜ່ວຍຜູກຄວາມທີ່ມີຂໍ້ກຳນົດໃຫ້ຂໍ້ຄວາມທີ່ຜູກຕ້ອງເປັນໄປຕາມຂໍ້ກຳນົດເຊັ່ນ ແມ່ນວ່າ ຖ້າ ຫາກ, ຖ້າ.

ຕົວຢ່າງ 4 : "ແມ່ພະຍາດມັນໂຕນ້ອຍຫຼາຍຈົນເຮົາເບິ່ງບໍ່ເຫັນ, ຖ້າໃຊ້ກ້ອງຈຸລະທັດເບິ່ງຈະເຫັນເປັນຍຸບໆ ຄື ໜອນເຈາະຊາກໝາເນົ່າພະຍາດເຫຼົ່ານີ້ເຮັດໃຫ້ຄົນຕາຍມາຫຼາຍຕໍ່ຫຼາຍແລ້ວ." (ປາບແມງວັນ: 28)

ຈາກຕົວຢ່າງທີ 4 : ເປັນການຜູກຄວາມທີ່ສະແດງເງື່ອນໄຂລະຫວ່າງ 2 ຖ້ອຍຄວາມຄື ຖ້ອຍຄວາມທີໜຶ່ງ "ແມ່ພະຍາດມັນໂຕນ້ອຍຫຼາຍຈົນເຮົາເບິ່ງບໍ່ເຫັນ" ແລະ ຖ້ອຍຄວາມທີ່ສອງ "ໃຊ້ກ້ອງຈຸລະທັດເບິ່ງຈະເຫັນເປັນຍຸບໆຄື ໜອນເຈາະຊາກໝາເນົ່າພະຍາດເຫຼົ່ານີ້ເຮັດໃຫ້ຄົນຕາຍມາຫຼາຍຕໍ່ຫຼາຍແລ້ວ." ຖ້ອຍຄວາມໜ້າເປັນຖ້ອຍຄວາມເປັນຕົວກຳນົດເງື່ອນໄຂໃຫ້ແກ່ຖ້ອຍຄວາມຫຼັງ. ດັ່ງນັ້ນ, ຈຶ່ງໃຊ້ໜ່ວຍຜູກ "ຖ້າ" ມາຊ່ວຍເຊື່ອມທັງສອງຖ້ອຍຄວາມເຂົ້າກັນໃຫ້ເຫັນເຖິງການກຳນົດເງື່ອນໄຂໃນບົດສື່ຄວາມນັ້ນ.

**2) ໜ່ວຍຜູກສະແດງທາງເລືອກ**

ໜ່ວຍຜູກສະແດງທາງເລືອກ ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມໝາຍຂອງການໃຫ້ຂໍ້ມູນຕັ້ງແຕ່ 2 ຂໍ້ມູນຂຶ້ນໄປໃຫ້ແກ່ຜູ້ສື່ສານເພື່ອເລືອກ ເຊັ່ນ ຫຼື, ຫຼືວ່າ.

ຕົວຢ່າງ 5 : "ຖ້າມີຜູ້ໃດຜູ້ໜຶ່ງເຈັບທ້ອງ ຫຼື ໄດ້ຮັບບາດເຈັບຂະນະເຮັດວຽກກໍຈະໄດ້ແກ້ໄຂປິ່ນປົວຂັ້ນຕົ້ນທັນ." (ຮ່ອມໃຈປູກຕົ້ນໄມ້: 50)

ຈາກຕົວຢ່າງທີ 5: ເປັນການຜູກຄວາມຂອງໜ່ວຍຜູກສະແດງທາງເລືອກໃນ 2 ຖ້ອຍຄວາມຄື ຖ້ອຍຄວາມທີ
ໜຶ່ງ "ຖ້າມີຜູ້ໃດຜູ້ໜຶ່ງເຈັບທ້ອງ" ແລະ ຖ້ອຍຄວາມທີ່ສອງ "ໄດ້ຮັບບາດເຈັບຂະນະເຮັດວຽກກໍຈະໄດ້ແກ້ໄຂປິ່ນປົວຂັ້ນຕົ້ນທັນ." ທັງສອງຖ້ອຍຄວາມນີ້ສະແດງໃຫ້ເຫັນວ່າ ຈະເປັນຖ້ອຍຄວາມໜ້າ ຫຼື ຖ້ອຍຄວາມຫຼັງ ກໍລ້ວນແຕ່ເປັນຖ້ອຍຄວາມສະແດງທາງເລືອກໄດ້ໜຶ່ງຢ່າງ. ດັ່ງນັ້ນ, ຈຶ່ງໃຊ້ໜ່ວຍຜູກ "ຫຼື" ມາເຊື່ອມທັງສອງຂໍ້ຄວາມເຂົ້າກັນໃນບົດສື່ຄວາມນັ້ນໆ.

**4) ໜ່ວຍຜູກສະແດງເວລາ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມໝາຍຂອງການບອກເວລາຂອງສິ່ງໃດໜຶ່ງເກີດຂຶ້ນ ເຊິ່ງແບ່ງອອກເປັນ ໜ່ວຍຜູກຄວາມບອກເວລາກ່ອນ, ໜ່ວຍຜູກຄວາມບອກເວລາພາຍຫຼັງ, ໜ່ວຍຜູກບອກເວລາດຽວກັນ, ໜ່ວຍຜູກບອກເວລາສິ້ນສຸດ ແລະ ໜ່ວຍຜູກຄວາມບອກເວລາເລີ່ມຕົ້ນ.

ຕົວຢ່າງ 6 : "ຕັ້ງແຕ່ມື້ນັ້ນມາບໍ່ເຫັນລຸງປ້ອງມາເຮືອນເຮົາຈົນເວລາຜ່ານໄປຕັ້ງສອງເດືອນຈຶ່ງເຫັນລຸງປ້ອງມາຫາພໍ່ ແລະ ຊວນກັນໄປກິນເຫຼົ້າອີກ..." (ນອນດອນ: 61)

ໃນຕົວຢ່າງທີ 6 : ເປັນໜ່ວຍຜູກຄວາມສະແດງເວລາເລີ່ມຕົ້ນຂອງເຫດການ ມັກປາກົດຢູ່ໜ້າຖ້ອຍຄວາມ ເຊັ່ນ "ຕັ້ງແຕ່" ເປັນໜ່ວຍຜູກຄວາມສະແດງເວລາເລີ່ມຕົ້ນຂອງເຫດການໃດໜຶ່ງຂອງຖ້ອຍຄວາມໃນບົດສື່ຄວາມ

**3) ໜ່ວຍຜູກສະແດງຕົວຢ່າງ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຕົວຢ່າງເພີ່ມ ເພື່ອໃຫ້ຂໍ້ຄວາມນັ້ນຊັດເຈນຂຶ້ນຕື່ມ: ເປັນຕົ້ນວ່າ, ຕົວຢ່າງເຊັ່ນ.

ຕົວຢ່າງ 7: "ຫຼັງຈາກທີ່ຕອນເອົາຕົ້ນໄມ້ມາປູກແລ້ວ ໝູ່ຜູ້ອື່ນກໍປະຕິບັດນຳໂດຍ ຊອກຫາເບ້ຍຕົ້ນໄມ້ມາຜູ້ລະສິບ ຫຼື ຊາວເບ້ຍແລ້ວພາກັນປູກຢ່າງເປັນຂະບວນ ມີຫຼາຍຄົນເອົາໝາກໄມ້ເຊັ່ນ ໝາກມີ້, ໝາກລຳໄຍ, ໝາກຫຸ່ງມາກ້າຢູ່ສວນນີ້ເພື່ອຈະປູກໃນໂອກາດຕໍ່ໄປ." (ຮ່ອມໃຈປູກຕົ້ນໄມ້: 53)

ຈາກຕົວຢ່າງທີ 7: ເປັນການຜູກຄວາມຂອງໜ່ວຍຜູກສະແດງຕົວຢ່າງ "ເຊັ່ນ" ເພື່ອຜູກລະຫວ່າງຖ້ອຍຄວາມທາງໜ້າຄື "ຫຼັງຈາກທີ່ຕອນເອົາຕົ້ນໄມ້ມາປູກແລ້ວ ໝູ່ຜູ້ອື່ນກໍປະຕິບັດນຳໂດຍຊອກຫາເບ້ຍຕົ້ນໄມ້ມາຜູ້ລະສິບ ຫຼື ຊາວເບ້ຍແລ້ວພາກັນປູກຢ່າງເປັນຂະບວນ ມີຫຼາຍຄົນເອົາໝາກໄມ້ " ແລະ ຂໍ້ຄວາມຫຼັງຍົກຕົວຢ່າງເພີ່ມຄື "ໝາກມີ້, ໝາກລຳໄຍ, ໝາກຫຸ່ງ..." ໂດຍການໃຊ້ໜ່ວຍຜູກເຊັ່ນ ຊ່ວຍຂະຫຍາຍຄວາມອອກໃຫ້ແຈ້ງກວ່າເກົ່າ.

**5) ໜ່ວຍຜູກສະແດງການສະຫຼຸບຄວາມ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມໝາຍຂອງການສະຫຼຸບຄວາມທີ່ກ່າວໄວ້ໃນປະໂຫຍກທີ່ກ່າວມາກ່ອນໜ້າແລ້ວມັກປາກົດຄຳ ແລະ ກຸ່ມຄຳ. ສະນັ້ນ, ໃນທີ່ສຸດ, ສະຫຼຸບວ່າ.

ຕົວຢ່າງ 8 : "ທ້າວເກັດດາໍລອຍຕໍ່ໄປບໍ່ໄດ້, ມັນດີ້ນເຈືອກໃຕ້ເຈືອກເໜືອ, ຍືດໄປຍືດມາສຸດຂີດແຕ່ກໍບໍ່ຫຼຸດ, ດີ້ນຈົນເມື່ອຍເສັ້ນສາຍນັ້ນກໍຍັງຖາປາກຢູ່ ໃນທີ່ສຸດມັນກໍອ່ອນແຮງ ສະພາບທຸກຢ່າງເປັນຄືປານິນໂຕທີ່ມັນໄດ້ສວາບກິນນັ້ນເອງ." (ປາຄໍ່ໂລພາ: 21)

ຈາກຕົວຢ່າງທີ 8: ເປັນໜ່ວຍຜູກຄວາມທີ່ຖ້ອຍຄວາມທາງຫຼັງນັ້ນບອກເຖິງ ຈຸດສະຫຼຸບສິ່ງສຳຄັນຂອງບັນດາຖ້ອຍຄວາມທີ່ສື່ສານມາກ່ອນນັ້ນພາຍໃນບົດຄື "ໃນທີ່ສຸດ" ເປັນໜ່ວຍຜູກສະແດງການສະຫຼຸບຄວາມຂອງຖ້ອຍຄວາມ "ທ້າວເກັດດຳລອຍຕໍ່ໄປບໍ່ໄດ້, ມັນດີ້ນເຈືອກໃຕ້ເຈືອກເໜືອ" ແລະ ຖ້ອຍຄວາມສະຫຼຸບຄວາມຂອງບັນດາຖ້ອຍຄວາມທີ່ອະທິ ບາຍພຶດຕິກຳຂອງທ້າວເກັດດຳແມ່ນ "ມັນກໍອ່ອນແຮງ ສະພາບທຸກຢ່າງເປັນຄືປານິນໂຕທີ່ມັນໄດ້ສວາບກິນນັ້ນເອງ"

**3.2 ປະເພດຄວາມໝາຍ ແລະ ໜ່ວຍຜູກຄວາມມະຫາພາກ**

ໜ່ວຍຜູກຄວາມຕາມໜ້າທີ່ມະຫາພາກປາກົດ 5 ປະເພດຄວາມໝາຍໄດ້ແກ່ ໜ່ວຍຜູກສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງການສະຫຼຸບຄວາມ, ສະແດງການຮຽງລຳດັບ ແລະ ສະແດງການຂະຫຍາຍຄວາມ ດັ່ງຂໍ້ມູນໃນ(ຕາຕະລາງທີ 2) ເຊິ່ງມັນສະແດງໃຫ້ເຫັນວ່າ ການຜູກດ້ວຍໜ່ວຍຜູກຄວາມທີ່ປາກົດຫຼາຍກວ່າໝູ່ແມ່ນ ໜ່ວຍຜູກສະແດງຄວາມຂັດແຍ້ງ (ຮ້ອຍລະ 23,68) ຮອງລົງມາໄດ້ແກ່ ໜ່ວຍຜູກສະແດງເຫດຜົນ (ຮ້ອຍລະ 21,71) ແລະ ໜ່ວຍຜູກສະແດງການສະຫຼຸບຄວາມ (ຮ້ອຍລະ 19,74) ຕາມລຳດັບຂອງການປາກົດໜ່ວຍຜູກຄວາມ 5 ປະເພດທາງຄວາມໝາຍດັ່ງຕໍ່ໄປນີ້

**4) ໜ່ວຍຜູກສະແດງການຂະຫຍາຍຄວາມ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມສຳພັນໃນລະດັບໂຄງສ້າງຂໍ້ຄວາມ ໃນທຳນອງດຽວກັນ, ເຊັ່ນດຽວກັນ, ຂະນະດຽວກັນ, ນອກຈາກນີ້, ປະການໜຶ່ງ, ອັນໜຶ່ງ, ອີກປະການໜຶ່ງ.

ຕົວຢ່າງ 9 : "ທ້າວແຈ້ຍັງມີຄວາມສາມາດເຮັດສຽງ ຫຼື ສອນສຽງສັດຮ້ອງໄດ້ຢ່າງແນບນຽນ ເຊັ່ນ: ສຽງໝາເຫົ່າ, ໝາຫອນ, ໝາຫວງດູກ, ໝາຖືກຄ້ອນ. ນອກຈາກນີ້ ຍັງເຮັດສຽງໝາແລ້ວ ລາວຍັງເຮັດສຽງໄກ່ຂັນ ໄກ່ກະຕາກ ສຽງ ກົບ ສຽງຂຽດ ແລະ ອື່ນໆ…" (ຕົວຕະຫຼົກອາຍ: 58)

ຈາກຕົວຢ່າງທີ 9 : "ນອກຈາກນີ້" ເປັນໜ່ວຍຜູກຄວາມທີ່ຊ່ວຍອະທິບາຍຂະຫຍາຍຄວາມໃຫ້ແກ່ບັນດາບົດທີ່ກ່າວມາກ່ອນນັ້ນໃຫ້ຈະແຈ້ງຂຶ້ນ ເປັນການໃຫ້ຂໍ້ມູນເພີ່ມເຕີມ. ສະນັ້ນ, ໃນໜ່ວຍຜູກຄວາມນີ້ ອາດປາກົດໄດ້ຢູ່ ເລີ່ມຕົ້ນ ຫຼື ສ່ວນກາງຂອງບົດສື່ຄວາມກໍໄດ້ ເຊິ່ງຂຶ້ນກັບບັນດາຖ້ອຍຄວາມທາງໜ້າທີ່ຕ້ອງການ ຂະຫຍາຍຄວາມເພີ່ມ ຫຼື ຊີ້ແຈງຄວາມໝາຍໃຫ້ໄດ້ລາຍລະອຽດກວ່າເກົ່າ ເຊັ່ນຄວາມສາມາດຂອງທ້າວແຈ້ ບໍ່ແມ່ນມີແຕ່ສອນສຽງໝາເຫົ່າ, ໝາຫອນ... ຍັງເຮັດສຽງໄກ່ຂັນ ໄກ່ກະຕາກ ສຽງກົບ, ຂຽດ ແລະອື່ນໆອີກ.

**5) ໜ່ວຍຜູກສະແດງການຮຽງລຳດັບ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມສຳພັນໃນລະດັບໂຄງສ້າງຂໍ້ຄວາມດ້ວຍການຮຽງໄປຕາມລຳດັບເຊັ່ນ ເມື່ອ, ຄັ້ງທຳອິດ, ແຕ່ກ່ອນ, ເລີ່ມທຳອິດ, ນັບແຕ່ນັ້ນມາ, ຕອນທ້າຍ...

ຕົວຢ່າງ 10 : "ນັບແຕ່ນັ້ນມາ ທ້າວເກັດດຳກໍຫາກິນໄປຕາມລຳພັງໂຕດຽວ, ລອຍລ່ອງໄປຕາມກະແສນ້ຳ ຈາກບຶງນ້ອຍລອຍສູ່ບຶງໃຫຍ່ ຈາກວັງໜຶ່ງໄປສູ່ອີກວັງໜຶ່ງ" (ປາຄໍ່ໂລພາ: 19)

ຈາກຕົວຢ່າງທີ 10 : ເປັນໜ່ວຍຜູກທີ່ປາກົດຢູ່ໃນການຜູກຄວາມ ລະຫວ່າງບົດສື່ຄວາມຍ່ອຍ ກັບບົດສື່ຄວາມຍ່ອຍ ທີ່ເປັນອົງປະກອບພາຍໃນບົດສື່ຄວາມທີ່ໃຫຍ່ຂຶ້ນ ເຮັດໜ້າທີ່ສະແດງເຖິງການລຳດັບຄວາມສຳພັນລະຫວ່າງເນື້ອໃນຂອງບົດສື່ຄວາມກັບບົດສື່ຄວາມ ທີ່ຜູ້ຂຽນຕ້ອງການສື່ເຖິງເລື່ອງ ຫຼື ເຫດການຕ່າງໆ ທີ່ຈັດລຽງຄວາມສຳຄັນອັນໃດເກີດກ່ອນ ອັນໃດເກີດນຳຫຼັງ ເພື່ອເຮັດໃຫ້ບົດມີຄວາມກ່ຽວເນື່ອງກັນໄປຕາມລຳດັບເຫດການເຊັ່ນ "ນັບແຕ່ນັ້ນມາ" ເຮັດໜ້າທີ່ຮຽງລຳດັບເຫດການຂອງທ້າວເກັດດຳຕ້ອງຫາກິນຕາມລຳພັງໂຕດຽວ...ໃນໂຄງສ້າງຂອງບົດສື່ຄວາມຍ່ອຍນີ້ມີຄວາມໝາຍສຳພັນກັບບົດສື່ຄວາມກ່ອນໜ້ານີ້ ທີ່ທ້າວເກັດດຳ ເມື່ອກ່ອນຢູ່ນຳກັນຝູງກັບປາໂຕອື່ນ.

**6) ໜ່ວຍຜູກສະແດງການຂະຫຍາຍຄວາມ**

ໝາຍເຖິງໜ່ວຍຜູກຄວາມທີ່ສະແດງຄວາມສຳພັນໃນລະດັບໂຄງສ້າງຂໍ້ຄວາມ ໃນທຳນອງດຽວກັນ, ເຊັ່ນດຽວກັນ, ຂະນະດຽວກັນ, ນອກຈາກນີ້, ປະການໜຶ່ງ, ອັນໜຶ່ງ, ອີກປະການໜຶ່ງ.

ຕົວຢ່າງ 10 : "ທ້າວແຈ້ຍັງມີຄວາມສາມາດເຮັດສຽງ ຫຼື ສອນສຽງສັດຮ້ອງໄດ້ຢ່າງແນບນຽນ ເຊັ່ນ: ສຽງໝາເຫົ່າ, ໝາຫອນ, ໝາຫວງດູກ, ໝາຖືກຄ້ອນ. ນອກຈາກນີ້ ຍັງເຮັດສຽງໝາແລ້ວ ລາວຍັງເຮັດສຽງໄກ່ຂັນ ໄກ່ກະຕາກ ສຽງ ກົບ ສຽງຂຽດ ແລະ ອື່ນໆ…" (ຕົວຕະຫຼົກອາຍ: 58)

ຈາກຕົວຢ່າງທີ 10 : "ນອກຈາກນີ້" ເປັນໜ່ວຍຜູກຄວາມທີ່ຊ່ວຍອະທິບາຍຂະຫຍາຍຄວາມໃຫ້ແກ່ບັນດາບົດທີ່ກ່າວມາກ່ອນນັ້ນໃຫ້ຈະແຈ້ງຂຶ້ນ ເປັນການໃຫ້ຂໍ້ມູນເພີ່ມເຕີມ. ສະນັ້ນ, ໃນໜ່ວຍຜູກຄວາມນີ້ ອາດປາກົດໄດ້ຢູ່ ເລີ່ມຕົ້ນ ຫຼື ສ່ວນກາງຂອງບົດສື່ຄວາມກໍໄດ້ ເຊິ່ງຂຶ້ນກັບບັນດາຖ້ອຍຄວາມທາງໜ້າທີ່ຕ້ອງການ ຂະຫຍາຍຄວາມເພີ່ມ ຫຼື ຊີ້ແຈງຄວາມໝາຍໃຫ້ໄດ້ລາຍລະອຽດກວ່າເກົ່າ ເຊັ່ນຄວາມສາມາດຂອງທ້າວແຈ້ ບໍ່ແມ່ນມີແຕ່ສອນສຽງໝາເຫົ່າ, ໝາຫອນ... ຍັງເຮັດສຽງໄກ່ຂັນ ໄກ່ກະຕາກ ສຽງກົບ, ຂຽດ ແລະອື່ນໆອີກ.

**7) ໜ່ວຍຜູກສະແດງການສະຫຼຸບຄວາມ**

ໝາຍເຖິງໜ່ວຍຜູກຄວາມທີ່ເຮັດໜ້າທີຄືກັນກັບ ການບອກການມ້ວນທ້າຍບັນຫາ ສະແດງຄວາມສຳພັນລະຫວ່າງບົດກັບຖ້ອຍຄວາມ ຫຼື ບົດແຍກຍ່ອຍກັບຖ້ອຍຄວາມໂດຍ ບົດແຍກຍ່ອຍ ຫຼື ຖ້ອຍຄວາມທີ່ຕາມຫຼັງໜ່ວຍຜູກຄວາມຈະມີເນື້ອໃນສະແດງເຖິງການສະຫຼຸບຄວາມຂອງບົດສື່ຄວາມ ຫຼື ບົດຍ່ອຍໃນບັນຫາໃດບັນຫາໜຶ່ງ. ໜ່ວຍຜູກນີ້ສາມາດປາກົດຢູ່ຕົ້ນ, ກາງ ຫຼື ທ້າຍຂອງໂຄງສ້າງບົດສື່ຄວາມກໍໄດ້. ບັນດາໜ່ວຍຜູກທີ່ສະແດງການສະຫຼຸບມີຄື ສະນັ້ນ, ດັ່ງນັ້ນ, ໂດຍສະຫຼຸບ ໃນທີ່ສຸດ, ໃນບໍ່ຊ້ານີ້, ເພາະສະນັ້ນ, ເພາະສະນັ້ນຈຶ່ງ, ຢ່າງໃດກໍຕາມ.

ຕົວຢ່າງ 11: "... ຄວາຍເຮົາກໍຫຼາຍ, ພໍ່ກັບອ້າຍເຈົ້າເບິ່ງບໍ່ຫຼົ່ອນດອກເພາະ ທັງໄຖນາທັງເຮັດໜ້າທີ່ປ້ອງກັນຄວາມສະຫງົບ. ດັ່ງນັ້ນ ໃຫ້ລູກກຳກັບລ້ຽງຄວາຍດີໆ ຕອນທີ່ຍັງພັກໂຮງຮຽນຢູ່ນີ້..." (ເພີ້ງຫາວຮັງ: 32)

ຈາກຕົວຢ່າງທີ 11: "ດັ່ງນັ້ນ" ເປັນໜ່ວຍຜູກຄວາມສະແດງການສະຫຼຸບຂອງບົດແຍກຍ່ອຍ ຫຼື ບົດທີ່ກ່າວມາກ່ອນແລ້ວເຊັ່ນ ບົດທີສອງ "ໃຫ້ລູກກຳກັບລ້ຽງຄວາຍດີໆ ຕອນທີ່ຍັງພັກໂຮງຮຽນຢູ່ນີ້..." ເປັນການສະຫຼຸບຄວາມຂອງບົດສື່ຄວາມທີໜຶ່ງ "...ຄວາຍເຮົາກໍຫຼາຍ, ພໍ່ກັບອ້າຍເຈົ້າເບິ່ງບໍ່ຫຼົ່ອນດອກເພາະທັງໄຖນາທັງເຮັດໜ້າທີ່ປ້ອງກັນຄວາມສະຫງົບ..." ໂດຍໃຊ້ໜ່ວຍຜູກຄວາມ "ດັ່ງນັ້ນ" ເປັນຕົວຜູກຄວາມຂອງບົດສື່ຄວາມທີ່ແຍກຍ່ອຍເຂົ້າເປັນບົດສື່ຄວາມໃຫຍ່ຂອງໜຶ່ງບັນຫາ.

**8) ໜ່ວຍຜູກສະແດງເຫດຜົນ**

ໝາຍເຖິງໜ່ວຍຜູກຄວາມສະແດງຄວາມສຳພັນໃນໂຄງສ້າງຂອງບົດທີ່ປະກອບຂຶ້ນດ້ວຍສາເຫດທີ່ໃຫ້ກະທຳ ແລະ ຜົນຂອງການກະທຳໃນຄວາມສຳພັນລະດັບໂຄງສ້າງນີ້ ບົດໜຶ່ງປະກອບດ້ວຍເຫດ ແລະ ຜົນໄປນຳກັນສະເໝີ ບັນດາໜ່ວຍຜູກທີ່ປາກົດມີ ເນື່ອງຈາກ, ເພາະ, ເພາະສະນັ້ນ ຈຶ່ງ, ດ້ວຍ, ຈຶ່ງ, ຍ້ອນ.

ຕົວຢ່າງ 12: "ແມ່ພະຍາດມັນໂຕນ້ອຍຫຼາຍຈົນເຮົາເບິ່ງບໍ່ເຫັນ ຖ້າບໍ່ໃຊ້ກ້ອງຈຸລະທັດເບິ່ງຈະເຫັນເປັນຍຸບໆຄືໜອນເຈາະຊາກໝາເນົ່າ ພະຍາດເຫຼົ່ານີ້ເຮັດໃຫ້ຄົນຕາຍມາຫຼາຍຕໍ່ຫຼາຍແລ້ວ ປີກາຍນີ້ນ້ອງຂອງເຮົາຄົນໜຶ່ງກໍຕາຍ ຍ້ອນ ເປັນທ້ອງຂີ້ຮາກ" (ປາບແມງວັນ: 38)

ຈາກຕົວຢ່າງທີ 12: "ຍ້ອນ" ເປັນໜ່ວຍຜູກຄວາມສະແດງເຫດຜົນເຖິງຄວາມສຳພັນລະຫວ່າງບົດກັບບົດແຍກຍ່ອຍ ຫຼື ບົດກັບຖ້ອຍຄວາມເປັນການບອກເຫດຜົນເຊິ່ງກັນແລະກັນເຊັ່ນ "ເປັນທ້ອງຂີ້ຮາກ" ເປັນຜົນຂອງບົດແຍກຍ່ອຍ "ແມ່ພະຍາດມັນໂຕນ້ອຍ

ຫຼາຍຈົນເຮົາເບິ່ງບໍ່ເຫັນ ຖ້າບໍ່ໃຊ້ກ້ອງຈຸລະທັດເບິ່ງຈະເຫັນເປັນຍຸບໆ ຄື ໜອນເຈາະຊາກໝາເນົ່າ...” ໂດຍໃຊ້ໜ່ວຍຜູກຄວາມ “ຍ້ອນ” ຜູກເພື່ອບອກເຖິງເຫດຜົນຂອງແມ່ພະຍາດທີ່ເຮັດໃຫ້ຄົນຕາຍ.

**9) ໜ່ວຍຜູກສະແດງຄວາມຂັດແຍ້ງ**

ໝາຍເຖິງໜ່ວຍເຊື່ອມທີ່ສະແດງໂຄງສ້າງຂອງບົດ ທີ່ເຮັດໜ້າທີສະແດງຄວາມຂັດແຍ້ງ ຫຼື ເນື້ອໃນຂອງບົດສື່ຄວາມກົງກັນຂ້າມກັນ ແຕ່ປາກົດຢູ່ໃນບົດດຽວກັນ ໜ່ວຍຜູກຄວາມບອກຄວາມຂັດແຍ້ງນີ້ຈະປາກົດ ຄື ແຕ່, ຢ່າງໃດກໍດີ, ໃນທາງກົງກັນຂ້າມ.

ຕົວຢ່າງ 13: “ໃນທາງກົງກັນຂ້າມ, ຖ້າພວກເຮົາມີການຂັດແຍ້ງແບ່ງເປັນສອງ ຂາດຄວາມສາມັກຄີ ບໍ່ໄວ້ເນື້ອເຊື່ອໃຈກັນແລ້ວ ກໍຈະບໍ່ມີຜົນດີຫຍັງຕໍ່ຕົນເອງກໍຄືຄົນອື່ນ” (ລ່ອງທາງໃຫ້ຖືກ: 51)

ຈາກຕົວຢ່າງທີ 13: ເປັນການຜູກຂໍ້ຄວາມທີ່ເຮັດໜ້າທີຜູກລະຫວ່າງບົດກັບບົດ ຫຼື ບົດແຍກຍ່ອຍ ກັບຖ້ອຍຄວາມທີ່ມີເນື້ອໃນກົງກັນຂ້າມກັນ ແຕ່ເວົ້າເຖິງເລື່ອງດຽວກັນ ດ້ວຍການສະແດງສອງ ຫຼື ສາມທັດສະນະທີ່ຂັດແຍ້ງກັນໃນບັນຫາດຽວກັນເຊັ່ນ ໜ່ວຍຜູກ “ໃນທາງກົງກັນຂ້າມ” ທີ່ເວົ້າເຖິງສິ່ງທີ່ດີ ແລະ ບໍ່ດີຂອງຄວາມສາມັກຄີກັນໃນສັງຄົມ.

**4. ວິພາກຜົນ**

ຈາກການວິເຄາະ ໜ່ວຍຜູກຄວາມໃນບົດເລື່ອງສັ້ນ “ຈາກໄປແລ້ວສິບປີເຫຼັ້ມທີ 3 ” ຂອງອຸທິນ ບຸນຍາວົງ ພົບວ່າ ໜ່ວຍຜູກຄວາມຕາມໜ້າທີ່ຈຸລະພາກມີໜ່ວຍຜູກຄວາມ 8 ປະເພດຕາມເກນທາງຄວາມໝາຍ ໂດຍຈັດລຳດັບຕາມຄວາມຖີ່ໃນການປາກົດຈາກຫຼາຍຫານ້ອຍໄດ້ແກ່ ໜ່ວຍຜູກຄວາມສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງຂະຫຍາຍຄວາມ, ສະແດງເງື່ອນໄຂ, ສະແດງທາງເລືອກ, ສະແດງເວລາ, ສະແດງຕົວຢ່າງ ແລະ

ໜ່ວຍຜູກຄວາມສະແດງການສະຫຼຸບຄວາມ; ສ່ວນໜ່ວຍຜູກຄວາມຕາມໜ້າທີ່ມະຫາພາກປາກົດຢູ່ 5 ປະເພດຕາມເກນທາງຄວາມໝາຍ ໂດຍຈັດລຳດັບຕາມຄວາມຖີ່ໃນການປາກົດການໃຊ້ຈາກຫຼາຍຫານ້ອຍໄດ້ແກ່ ໜ່ວຍຜູກສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງການສະຫຼຸບຄວາມ, ໜ່ວຍຜູກສະແດງການຮຽງລຳດັບ, ສະແດງການຂະຫຍາຍຄວາມ; ບັນດາໜ່ວຍຜູກຄວາມໝາຍເຫຼົ່ານີ້ສະແດງໃຫ້ເຫັນວ່າ ການຜູກຄວາມໝາຍລະຫວ່າງຖ້ອຍຄວາມ, ຫຍໍ້ໜ້າ ຫຼື ຜູກເນື້ອຄວາມໃນຕົວບົດນັ້ນ ເພື່ອເຮັດໃຫ້ບົດສື່ຄວາມໃນຕົວບົດມີຄວາມກ່ຽວເນື່ອງ ແລະ ເປັນເລື່ອງດຽວກັນ ພ້ອມກັນນັ້ນຍັງເປັນໜ່ວຍໜຶ່ງຂອງເຄື່ອງມືການຜູກຄວາມທີ່ມີລັກສະນະໂດດເດັ່ນ ແລະ ສຳຄັນໃນລະດັບພາສາບົດສື່ຄວາມປະເພດການຂຽນ. ສະນັ້ນ, ໃນທາງທິດສະດີປະເພດໜ້າທີ່ການຜູກຄວາມຈຸລະພາກ ແລະ ມະຫາພາກສອດຄ່ອງກັບຂອງ Werth (1984); ສ່ວນການຈຳແນກປະເພດຄວາມໝາຍໜ່ວຍຜູກຄວາມສອດຄ່ອງກັບທິດສະດີໄວຍາກອນລາວພາກ 2 ວະຈີວິພາກ Paphaphanh (2000) ທີ່ແບ່ງປະເພດ ຄຳຕໍ່ອອກເປັນ 8 ແລະ ຍັງສອດຄ່ອງ Wipah (1986) ທີ່ສຶກສາການຜູກຄວາມຂອງພາສາໄທທີ່ແບ່ງຄຳເຊື່ອມຕໍ່ບົດສື່ຄວາມໃນພາສາໄທ ແບ່ງອອກເປັນ 16 ຊະນິດຍ່ອຍ ຄື ຄວາມສຳພັນທີ່ສະແດງການເສີມ, ສະແດງລາຍລະອຽດ, ສະແດງທາງເລືອກ, ສະແດງການປຽບທຽບ, ສະແດງຄວາມກົງກັນຂ້າມ, ສະແດງການຍອມຮັບ, ສະແດງຕົວຢ່າງ, ສະແດງການອະທິບາຍ, ສະແດງເຫດ, ສະແດງຄວາມມຸ່ງໝາຍ, ສະແດງຜົນ, ສະແດງເງື່ອນໄຂ, ສະແດງຄວາມຄິດເຫັນ, ສະແດງເວລາ, ສະແດງການເຂົ້າສູ່ປະເດັນໃໝ່ ແລະ ຄວາມສຳພັນທີ່ສະແດງຄວາມຕໍ່ເນື່ອງ; ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Jaratjarungkiat (2000) ສຶກສາໜ່ວຍຜູກບົດສື່ຄວາມພາສາໄທຕັ້ງແຕ່ສະໄໝສຸໂຂໄທຈົນເຖິງປັດຈຸບັນ ພົບວ່າ ໜ່ວຍສື່ຄວາມໃນຂໍ້ຄວາມພາສາໄທຈຳແຈກຕາມໜ້າທີ່ທາງອັດຖະສາດ ມີ 2 ປະເພດຄືການຜູກຄວາມໃນລະດັບຈຸລະພາກປາກົດມີ 12 ປະເພດຍ່ອຍຄືສະແດງຄວາມຂັດແຍ້ງ, ເງື່ອນໄຂ, ສົມມຸດຖານ, ທາງເລືອກ, ການເສີມຄວາມ, ເວລາ, ເຫດຜົນ, ວັດຖຸປະສົງ ແລະ ຜົນ, ຕົວຢ່າງ, ສະຫຼຸບ ແລະ ສະແດງວິທີການ ແລະ ການຜູກຄວາມໃນລະດັບມະຫາພາກ ປາກົດມີ 6 ປະເພດຍ່ອຍຄື ການບອກການປ່ຽນແປງ, ບອກການເພີ່ມຄວາມ, ບອກການແຈກແຈງ, ບອກການສະຫຼຸບຄວາມ, ບອກການເປັນເຫດເປັນຜົນ ແລະ ບອກຄວາມຂັດແຍ້ງ ແລະ ຍັງສອດຄ່ອງກັບການຄົ້ນຄວ້າຂອງ Yodsirajinda. (2002) ທີ່ສຶກສາໜ່ວຍຜູກໃນວັດຈະນະລີລາແບບເວົ້າ ແລະ ແບບຂຽນໃນພາສາໄທ ພົບວ່າ ທັງພາສາເວົ້າ ແລະ ພາສາຂຽນລ້ວນແຕ່ມີໜ່ວຍຜູກຄວາມທີ່ເຮັດໜ້າທີ່ໃນລະດັບຈຸລະພາກ ທີ່ເວົ້າເຖິງການຜູກຄວາມຂອງໜ່ວຍຜູກໃນຖ້ອຍຄວາມກັບຖ້ອຍຄວາມ ຫຼື ຖ້ອຍຄວາມກັບບົດສື່ຄວາມ ແລະ ໃນລະດັບມະຫາພາກເປັນການຜູກຄວາມໃນລະດັບໂຄງສ້າງຂອງບົດ ໂດຍອີງຕາມປະເພດການວິເຄາະຕາມເກນຂອງອັດຖະສາດ

**5. ສະຫຼຸບ**

ຈາກການສຶກສາໜ່ວຍຜູກຄວາມໃນບົດເລື່ອງສັ້ນ “ຈາກໄປແລ້ວສິບປີເຫຼັ້ມທີ 3 ” ຂອງອຸທິນ ບຸນຍາວົງ ຜູ້ຄົ້ນຄວ້າພົບ ໜ່ວຍຜູກຄວາມມີ 2 ໜ້າທີ່ ຄື ໜ້າທີ່ຜູກຄວາມຈຸລະພາກໃນໜ້າທີ່ນີ້ປາກົດ 8 ປະເພດໜ່ວຍຄວາມໝາຍໄດ້ແກ່ ໜ່ວຍຜູກສະແດງຄວາມຂັດແຍ້ງ , ສະແດງເຫດຜົນ, ສະແດງການຂະຫຍາຍຄວາມ, ສະແດງເງື່ອນໄຂ, ສະແດງທາງເລືອກ, ສະແດງເວລາ, ສະແດງຕົວຢ່າງ, ແລະ ໜ່ວຍສະແດງການສະຫຼຸບຄວາມ; ສ່ວນ, ໜ້າທີ່ຜູກຄວາມມະຫາພາກໃນໜ້າທີ່ນີ້ປາກົດ 5 ປະເພດໜ່ວຍຄວາມໝາຍ ຄື ໜ່ວຍຜູກສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງການສະຫຼຸບຄວາມ, ສະແດງການຮຽງລຳດັບ ແລະ ສະແດງການຂະຫຍາຍຄວາມ.

ຈາກການຈຳແນກໜ່ວຍຜູກຄວາມຕາມໜ້າທີ່ອອກເປັນຈຸລະພາກ ແລະ ມະຫາພາກເປັນສິ່ງທີ່ຊ່ວຍໃຫ້ເຫັນໂຄງສ້າງທັງໝົດຂອງບົດ ເມື່ອແຍກໜ້າທີ່ອອກຈາກກັນຢ່າງຊັດເຈນແລ້ວ ເຫັນໄດ້ວ່າເຖິງແມ່ນໜ່ວຍຜູກຄວາມໜ່ວຍດຽວກັນ ເມື່ອເຮັດໜ້າທີ່ໃນຕົວບົດທີ່ຕ່າງກັນ ກໍຈະສະແດງຄວາມສຳພັນທີ່ແຕກຕ່າງກັນອອກໄປຕາມລະດັບຂອງການຜູກຄວາມເຊັ່ນ ໜ່ວຍຜູກຄວາມສະແດງເຫດຜົນໃນຈຸລະພາກ ແລະ ມະຫາພາກ ແມ່ນວ່າຈະເປັນຮູບໜ່ວຍຜູກດຽວກັນສະແດງຄວາມໝາຍປະເພດດຽວກັນ ແຕ່ບໍ່ສາມາດເປັນໜ່ວຍຜູກຄວາມທີ່ປາກົດຕຳແໜ່ງດຽວກັນໃນບົດສື່ຄວາມໄດ້ ກໍຍ້ອນວ່າໜ້າທີ່ຂອງໜ່ວຍຜູກຄວາມຕ່າງກັນ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ໜ່ວຍຜູກຄວາມໃນບົດສື່ຄວາມເປັນລັກສະນະສະເພາະທີ່ສາມາດຈຳແນກຕາມໜ້າທີ່ ແລະ ປະເພດຄວາມໝາຍໄດ້ຢ່າງຊັດເຈນ ແລະ ງ່າຍໃນການວິເຄາະ.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະ ນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**


Angkhaphanichkit, C. (2019). *Discourse Analysis* . Bangkok: .2nd printing Thammasat University.

Bamrungrak, C. (2020). *Language and Linguistics.* bangkok: 2nd printing. Thammasat University Press.

Burusphat, S. (1994). *) Verbal analysis: text-level language analysis.* Bangkok: 2nd printing Sahathammik.

Duangchan, B. (2023). *The Figures of Speech in the Lao Revolutionary Song.* Souphanouvong University Journal of Multidisciplinary Reseach and Development.

Darachai, S., & Wansannapreecha, W. (2019). *Conjunctive cohesion in Thai lslamic Verdicts of Sheikhul lslam.* Journal of Liberal Arts, prince of songkla University, 11(1): 338-359.

Halliday, M., & Hasan, R. (1976). *Cohesion in English.* Hongkong: Longman.

Jaratjarungkiat, D. (2000 ). *Discourse connectors in Thai from the Sukhothai period to the present* . [Doctoral Thesis], Chulalongkorn University .

Krejcie, R. V., & Morgan, D. W. (1970). Determining Sample Size for Research Activities. *Educational and Psychological Measurement*, 30(3), 607-610.

Louwerse, M. M. (2000). *From Cohesion in Text to Coherence in Comprehension.* [Doctoral Thesis], The University of Edinburgh.

Longacre, R. (1983). *The Grammar of Discourse* . New york: Plenum press.

NIMNUAN, L., SYVONGSAK, S., DOUNGCHANH, B., SONETHALA , A., & INVANKHAM, M. (2022). The Phonology of Tailue Tribe in Dontan Village, Xienghone District, Sayyaboury Province : https://doi.org/10.69692/SUJMRD080219. *Souphanouvong University Journal Multidisciplinary Research and Development*, *8*(2), 19–27. Retrieved from http://www.su-journal.com/index.php/su/article/view/196

Paphaphanh, B. (2000). *Current Lao Grammar Part 2 speech classification.* National Education Science Research Institute.

SYVONGSAK, S., SYSOUPHANH, S., NIMNUAN, L., & SONETHALA, A. (2021). LiteratureTastes in Daoneua's "Pharyouxivid" Novel. *Souphanouvong University Journal Multidisciplinary Research and Development*, *7*(1), 102–113. Retrieved from http://www.su-journal.com/index.php/su/article/view/102

Suwatchai, k. (2010). *Cohesion in narratives of Thai children aged 4-7 years from different care environments.* [Master Thesis], Thammasat University.

Udin, B. (2010). *Short story "Ten years gone, volume 3" the best literature for children.* phasxaygrafix.

Werth, P. (1984). *Focus. Coherence and Emphasis.* New York and London: Croom Helm .

Wipah, C. ( 1986 ). *Cohesion in Thai* . [Unpublished Doctoral Dissertation], Georgetown University .

Yodsirajinda, K. (2002). *Connectors in the spoken and written styles in Thai for the degree of master of arts in Linguistics Chulalongkorn University.* bangkok: Chulalongkorn University .


ຕາຕະລາງ 1 ການຈຳແນກໜ່ວຍຜູກຄວາມຕາມປະເພດຄວາມໝາຍ ແລະ ໜ້າທີ່ມະຫາພາກ

| ລ/ດ | ປະເພດໜ້າທີ່ / ປະເພດທາງຄວາມໝາຍ | ມະຫາພາກ | | |
|---|---|---|---|---|
| | | ໜ່ວຍຜູກຄວາມ | ຈຳນວນຄັ້ງ | ເປີເຊັນ |
| 1 | ສະແດງຄວາມຂັດແຍ້ງ | ແຕ່ (10), ແຕ່ວ່າ (9), ພຽງແຕ່ (5) | 28 | 18,42 |
| 2 | ສະແດງເຫດຜົນ | ເນື່ອງຈາກ (8), ເຫດທີ່ວ່າ (6), ກໍເພາະ (4), ຈຶ່ງ (3), ດັ່ງນັ້ນ (3), ດ້ວຍເຫດນີ້ຈຶ່ງ (1) | 25 | 16,45 |
| 3 | ສະແດງການຂະຫຍາຍຄວາມ | ເພາະວ່າ(7), ຄື(7), ກໍຄື(5), ນັ້ນຄື,(3) ອີກແບບໜຶ່ງ (1) | 23 | 15,13 |
| 4 | ສະແດງເງື່ອນໄຂ | ແມ່ນວ່າ (9), ຖ້າຫາກ (7), ຖ້າ (3) | 19 | 12,50 |
| 5 | ສະແດງທາງເລືອກ | ຫຼື(12), ຫຼືວ່າ(7) | 17 | 11,18 |
| 6 | ສະແດງເວລາ | ຕັ້ງແຕ່ (3), ຕໍ່ມາ (2), ຕອນນັ້ນ (2), ຫຼັງຈາກ (2), ຂະນະນັ້ນ(1), ເວລາດຽວກັນ(1), ລະຫວ່າງ(1), ຈົນ(1), ກ່ອນ(1), ແລ້ວ(1) | 15 | 9.87 |
| 7 | ສະແດງຕົວຢ່າງ | ເປັນຕົ້ນວ່າ (5), ຕົວຢ່າງເຊັ່ນ(4), ເຊັ່ນ (4) | 13 | 8,55 |
| 8 | ສະແດງການສະຫຼຸບຄວາມ | ສະນັ້ນ(6), ໃນທີ່ສຸດ(4), ສະຫຼຸບວ່າ(2) | 12 | 7,89 |

| ລວມ | 152 | 100 |
|---|---|---|

ຕາຕະລາງ 2 ການຈຳແນກໜ່ວຍຜູກຄວາມຕາມປະເພດຄວາມໝາຍ ແລະ ໜ້າທີ່ມະຫາພາກ

| ລ/ດ | ປະເພດໜ້າທີ່ / ປະເພດທາງຄວາມໝາຍ | ມະຫາພາກ | | |
|---|---|---|---|---|
| | | **ໜ່ວຍຜູກຄວາມ** | **ຈຳນວນຄັ້ງ** | **ເປີເຊັນ** |
| 1 | ສະແດງຄວາມຂັດແຍ້ງ | ແຕ່ (20), ຢ່າງໃດກໍດີ (11), ໃນທາງກົງກັນຂ້າມ (5) | 36 | 23,68 |
| 2 | ສະແດງເຫດຜົນ | ເນື່ອງຈາກ (9), ເພາະ (8), ເພາະສະນັ້ນ (6), ຈຶ່ງ (4), ດ້ວຍ (3), ຈິ່ງ (2), ຍ້ອນ (1) | 33 | 21,71 |
| 3 | ສະແດງການສະຫຼຸບຄວາມ | ສະນັ້ນ (8), ດັ່ງນັ້ນ (6), ໂດຍສະຫຼຸບ (5) ໃນທີ່ສຸດ (3), ໃນບໍ່ຊ້ານີ້ (2), ເພາະສະນັ້ນ (2), ເພາະສະນັ້ນຈຶ່ງ (2), ຢ່າງໃດກໍຕາມ (2) | 30 | 19,74 |
| 4 | ສະແດງການຮຽງລຳດັບ | ເມື່ອ (8), ຄັ້ງທຳອິດ (6), ແຕ່ກ່ອນ (6), ເລີ່ມທຳອິດ (5), ນັບແຕ່ນັ້ນມາ (2), ຕອນທ້າຍ (1) | 28 | 18,42 |
| 5 | ສະແດງການຂະຫຍາຍຄວາມ | ໃນທຳນອງດຽວກັນ (5), ເຊັ່ນດຽວກັນ (4), ຂະນະດຽວກັນ (4), ນອກຈາກນີ້ (4), ປະການໜຶ່ງ(4), ອັນໜຶ່ງ (2,) ອີກປະການໜຶ່ງ (2) | 25 | 16,45 |
| **ລວມ** | | | **152** | **100** |